ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກົມທີ່ດິນ

№. 0731

ເລກທີ........../ກຊສ.ກທດ

ນະຄອນຫຼວງວຽງຈັນ, ວັນທີ 28 FEB 2023

# ແຈ້ງການ

**ເຖິງ:** ວິສາຫະກິດ.......................................................................................................

**ເລື່ອງ:** ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຢູ່ກົມທີ່ດິນ.

- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014.;
- ອີງຕາມ ຂໍ້ຕົກລົງວ່າດ້ວຍທຸລະກິດກ່ຽວກັບທີ່ດິນ ສະບັບເລກທີ 4329/ກຊສ, ລົງວັນທີ 23 ສິງຫາ 2022;
- ອີງຕາມ ໃບທະບຽນວິສາຫະກິດ ເລກທີ...........................ລົງວັນທີ.......................................

ກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍແຈ້ງມາຍັງທ່ານຊາບວ່າ: ໃບທະບຽນວິສາຫະກິດ ເລກທີ..............................ລົງວັນທີ.............................ທີ່ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນຍັງບໍ່ສາມາດເປັນບ່ອນອີງໃນການເຄື່ອນໄຫວດຳເນີນທຸລະກິດກ່ຽວກັບທີ່ດິນໄດ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຂໍ້ຕົກລົງ ວ່າດ້ວຍທຸລະກິດກ່ຽວກັບທີ່ດິນ ເລກທີ 4392/ກຊສ, ລົງວັນທີ 25 ສິງຫາ 2022. ສະນັ້ນ, ຈິ່ງສະເໜີໃຫ້.........................................................................................
ດຳເນີນການຂໍໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ນຳກົມທີ່ດິນ ພາຍໃນກຳນົດເວລາ ຫົກເດືອນ ນັບແຕ່ໄດ້ຮັບແຈ້ງການນີ້ເປັນຕົ້ນໄປ. ຖ້າກາຍກຳນົດເວລາດັ່ງກ່າວ ກົມທີ່ດິນ ຈະສະເໜີຫາກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອໂຈະໃບທະບຽນວິສາຫະກິດດັ່ງກ່າວ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຮີບຮ້ອນເຂົ້າມາພົວພັນເອົາຊຸດຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ນຳກົມທີ່ດິນ.

ຫົວໜ້າກົມ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກົມທີ່ດິນ

ວິລະນະ ສອນນະສິນ

ຜູ້ປະສານງານ:

1. ທ່ານ. ບຸນດີກ ບຸນພະຄົມ ເບີໂທ 020 561 22 582
2. ທ່ານ. ບຸນລວມ ລໍມະນີ ເບີໂທ 020 525 77 567